5

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-GENERATION PUBLIC COMPANY



ບົດສະຫຼຸບຜົນງານ 5ປີ
5YEARS REPORT









Registered ISO 14001:2004 UKAS MANAGEMENT SYSTEMS 127

ASIAMONEY COUNTRY DEALS 2014

BMTRADA No. 10496 UKAS MANAGEMENT SYSTEMS 012

TRIS RATING BBB+

2010 - 2015



ສາລະບານ
Contents

-	ບົດຄວາມຈາກປະທານສະພາບໍລິຫານ Message from the Chairman of Board of Directors	4-5
-	ຄຳເຫັນ ຂອງ ທ່ານ ຜູ້ອຳນວຍການໃຫຍ່ Message from the Managing Director & CEO	6-7
I.	ເງື່ອນໄຂ ແລະ ການສ້າງຕັ້ງບໍລິສັດ The Establishment of EDL-Generation Public Company	8
II	ປະຫວັດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ History of EDL-Generation Public Company	11
III.	ເປົ້າໝາຍຫລັກຂອງການດຳເນີນທຸລະກິດ The Core Business Operation	12
IV.	ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ Organization Chart and Management	16
V.	ການພັດທະນາຊັບພະຍາກອນມະນຸດ Human Resource Development	19
VI.	ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ The Business Operation and The Business Operating Result	22
1.	ການຜະລິດພະລັງງານ, ການຈຳໜ່າຍພະລັງງານ ແລະການບໍລິຫານນ້ຳ Power Generation, Selling Energy and Water Management	23-26
2.	ວຽກບຳລຸງຮັກສາ ແລະ ສ້ອມແປງ Operation and Maintenance	27-28
VII.	ການຂະຫຍາຍ ແລະ ພັດທະນາທຸລະກິດ Business Expansion and Development	29
VIII.	ພາກການເງິນ Finance	30-35
1.	ມອບພັນທະໃຫ້ລັດ Royalty fee and Other duties	36
2.	ໂຄງສ້າງຜູ້ຖືຮຸ້ນ Shareholder Structure	36
IX.	ການໃຫ້ບໍລິການ ຂອງ ມະນຸດກົບ (ນັກດຳນ້ຳ) Diving service	40
X.	ລາງວັນຕ່າງໆ ທີ່ ຜ-ຟຟລ ໄດ້ຮັບ Achievements of EDL-Gen	41-43
XI.	ການປະກອບສ່ວນຕໍ່ສັງຄົມ Social Contribution	44-48



ບົດຄວາມຈາກປະທານສະພາບໍລິຫານ

ໃນຂະນະທີ່ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວ ທັງຊາດ ພວມຈັດຕັ້ງເຊື່ອມຊຶມ ແລະ ເລີ່ມເຂົ້າສູ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກເຂົ້າສູ່ຊີວິດຕົວຈິງຢູ່ໃນທົ່ວສັງຄົມ.

ປີ 2015 ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ ໄດ້ດຳເນີນທຸລະກິດຂອງຕົນມາເປັນເວລາ 05 ປີ ພາຍຫຼັງທີ່ໄດ້ຮັບການສ້າງຕັ້ງຂຶ້ນເປັນ ບໍລິສັດມະຫາຊົນ ໃນວັນທີ 15 ທັນວາ 2010 ແລະ ໄດ້ອອກຈຳໜ່າຍຮຸ້ນເພີ່ມທຶນຄັ້ງທຳອິດ (IPO) ຈາກນັ້ນກໍ່ໄດ້ນຳຮຸ້ນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 11 ມັງກອນ 2011 ເຊິ່ງໃນໄລຍະການຫັນເປັນບໍລິສັດມະຫາຊົນນັບໄດ້ວ່າເປັນສິ່ງທ້າທາຍພໍສົມຄວນ. ພວກເຮົາຕ້ອງດຳເນີນການປັບປຸງຫຼາຍວຽກງານ ທັງໂຄງຮ່າງການຈັດຕັ້ງ, ກົດລະບຽບຂອງບໍລິສັດ ແລະ ລະບົບມາດຕະຖານບັນຊີ ເພື່ອໃຫ້ເປັນສາກົນ ແລະ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ.


ພວກເຮົາໄດ້ວາງແຜນຍຸດທະສາດແຕ່ ປີ 2010 ຮອດ ປີ 2020 ໄດ້ຊັດເຈນສົມຄວນ ແລະ ກໍ່ໄດ້ມີໝາກຜົນໃນການປະຕິບັດເປັນທີ່ໜ້າພໍໃຈຢ່າງຍິ່ງ, ໂດຍສະເພາະການເພີ່ມກຳລັງຕິດຕັ້ງໃຫ້ໄດ້ຕາມໝາຍ 2.400 MW ພາຍໃນປີ 2020 ຊຶ່ງໃນທ້າຍ ປີ 2015 ນີ້ ພວກເຮົາສາມາດບັນລຸໄດ້ 1.131 MW. ພວກເຮົາຍັງໄດ້ວາງນະໂຍບາຍໃນການພັດທະນາທຸລະກິດການສະໜອງພະລັງງານໄຟຟ້າ ຈາກຫລາຍແຫລ່ງພະລັງງານເພີ່ມເຕີມເຊັ່ນ: ພະລັງງານຈາກແສງຕາເວັນ, ພະລັງງານຈາກລົມ ແລະອື່ນໆ.

ຜ-ຟຟລ ໃຫ້ຄວາມສຳຄັນທີ່ສຸດຕໍ່ການຈັດສັນຜົນຕອບແທນແກ່ນັກລົງທຶນອັນເປັນນະໂຍບາຍຫຼັກຂອງບໍລິສັດ, ໂດຍໄດ້ມີການປັນຜົນໃນແຕ່ລະປີແມ່ນບໍ່ຫຼຸດ 50% ຂອງກຳໄລສຸດທິ ເພື່ອໃຫ້ສອດຄ່ອງກັບນະໂຍບາຍເງິນປັນຜົນຂອງບໍລິສັດ, ເຖິງແມ່ນວ່າໃນໄລຍະຜ່ານມາພວກເຮົາໄດ້ລົງທຶນ ໃນການເພີ່ມກຳລັງຕິດຕັ້ງຫຼາຍພໍສົມຄວນ, ຊຶ່ງເຮັດໃຫ້ການລະດົມທຶນໃນໄລຍະຜ່ານມາ ຜ-ຟຟລ ກໍໄດ້ຮັບຄວາມສົນໃຈຈາກນັກລົງທຶນເກີນຄວາມຄາດໝາຍ.

ຄວາມສຳເລັດທັງໝົດໃນໄລຍະ 5 ປີ ຜ່ານມານີ້, ເກີດຂຶ້ນໄດ້ດ້ວຍຄວາມຮ່ວມມືຮ່ວມໃຈ ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງຂອງພະນັກງານ ແລະ ການສະໜັບສະໜູນເປັນຢ່າງດີ ທີ່ບໍລິສັດໄດ້ຮັບຈາກທຸກໆ ພາກສ່ວນທີ່ກ່ຽວຂ້ອງ.

ຂ້າພະເຈົ້າ, ຂໍຕາງໜ້າໃຫ້ສະພາບໍລິຫານ, ຜູ້ບໍລິຫານ ແລະ ພະນັກງານ ຂໍສະແດງຄວາມຮູ້ບຸນຄຸນຕໍ່ພັກ-ລັດ ທີ່ໄດ້ໃຫ້ການຊີ້ນຳ ແລະ ສະໜັບສະໜູນການດຳເນີນງານຂອງ ຜ-ຟຟລ ຢ່າງເປັນປະຈຳ, ພ້ອມດຽວກັນນັ້ນກໍ່ ຂໍຂອບໃຈຕໍ່ນັກລົງທຶນພາຍໃນ ແລະ ຕ່າງປະເທດທີ່ໄດ້ໃຫ້ການສະໜັບສະໜູນ ແລະ ໄວ້ວາງໃຈຕໍ່ການດຳເນີນງານຂອງພວກເຮົາ ແລະ ພວກເຮົາກຽມພ້ອມທີ່ຈະພັດທະນາຕົນເອງ ໃຫ້ເປັນຜູ້ນຳໃນການພັດທະນາແຫຼ່ງສະໜອງພະລັງງານໄຟຟ້າ ແລະ ຜະລິດກະແສໄຟຟ້າ ເພື່ອຕອບສະໜອງຄວາມຕ້ອງການໃນຂົງເຂດຢ່າງພຽງພໍ.

ປະທານສະພາບໍລິຫານ



ດຣ. ຄຳມະນີ ອິນທິລາດ

Message from the Chairman of Board of Directors

In the events that the party, the military and the people of Laos are preparing to implement the directives of the X General Meeting of the Lao Revolutionary People's Party.

In 2015 EDL-Gen has been operating its business for 5 years after its establishment on December 15th, 2010 and issued the first ordinary share to increase the Company's registered capital (Initial Public Offering (IPO) and EDL-Gen was officially listed on the 11th January 2011 on the Lao Securities Exchange (LSX). The listing was a very challenging task for us as the company had to go through a lot of improvements such as structure of organization, company policies, standard of accounting system as the international standards and to fully comply with the enterprise laws.


Our strategy plan from 2010 to 2020 clearly deserved the result and the performance is very satisfactory, which is to exceed the installed capacity to 2,400MW by 2020, and by the end of 2015 we have now achieved 1,131MW. We have policies in develop business providing electrical energy from more sources, such as solar energy, wind energy and others.

EDL-Gen has placed great importance to shareholder benefits, and has maintained a dividend policy payout ratio of no less than 50% in accordance with the dividend policy of the Company. Although in the past 5 years, EDL-Gen has successfully raised financing from both existing and new shareholders, foreign and local holders. This has reflected the confidence and trust by our shareholders.

The Achievement over the past 5 years, our production has been very positive, mainly with the help of our diligent staffs and supporting from all shareholders involved.

On behalf of the Board of Directors and EDL-Gen's staff, I would like to appreciate and express my sincere to the governme nt for the persistently leading and supporting our operations. Furthermore I would like to thank the domestic and international investors for great support and trust in our company. We are firmly committed to promote EDL-Gen to be a leading company providing energy demand in the region.

Chairman of the Board of Directors



Dr. Khammany INTHIRATH



ຄຳເຫັນຂອງຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍຂຶ້ນທະບຽນກັບກະຊວງອຸດສະຫະກຳ ແລະ ການຄ້າ ໃນນັ້ນມີທຶນຈົດທະບຽນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ຜ-ຟຟລ ໄດ້ມີການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຄັ້ງທີ I ຈຳນວນ 217.149.000 ຮຸ້ນ, ໃນວັນທີ 07 ມັງກອນ 2011 ແລະ ມີທຶນຈົດທະບຽນເພີ່ມຂຶ້ນເປັນ 3.474.388.200.000 ກີບ ແລະ ຈຳນວນຮຸ້ນທັງໝົດເພີ່ມຂຶ້ນເປັນ 868.597.050 ຮຸ້ນ. ຜ-ຟຟລ ກໍ່ໄດ້ນຳຮຸ້ນເຂົ້າໄປຈົດທະບຽນໃນຕະຫລາດຫລັກຊັບລາວ ໃນວັນທີ 11 ມັງກອນ 2011..

ໃນປະຈຸບັນ ຜ-ຟຟລ ແມ່ນເປັນທີ່ຮູ້ຈັກກັນດີໃນນາມ ບໍລິສັດ ຜະລິດໄຟຟ້າດ້ວຍພະລັງງານນ້ຳ ແລະ ຍັງເປັນຜູ້ຜະລິດລາຍໃຫຍ່ຂອງປະເທດ ຊຶ່ງບໍລິສັດໄດ້ມີແຜນຈະຂະຫຍາຍກຳລັງການຜະລິດໄຟຟ້າຈາກ 387 MW ໃນ ປີ 2010 ມາເປັນ 2.400 MW ໃນ ປີ 2020 ເພື່ອຮອງຮັບຄວາມຕ້ອງການທັງພາຍໃນ ແລະ ຕ່າງປະເທດ. ມາຮອດ ປີ 2015 ບໍລິສັດໄດ້ມີການລະດົມທຶນ 4 ຄັ້ງ ເພື່ອເຂົ້າໄປຊື້ເອົາໂຄງການ ເຂື່ອນຜະລິດໄຟຟ້າ ຂອງ ຟຟລ ແລະ ຮຸ້ນ ຂອງ ຟຟລ ໃນໂຄງການ ເຂື່ອນຜະລິດໄຟຟ້າເອກະລາດ ທີ່ກໍ່ສ້າງສຳເລັດແລ້ວ ແລະ ກຳລັງດຳເນີນການຢູ່ ເຮັດໃຫ້ກຳລັງຕິດຕັ້ງ ຂອງ ບໍລິສັດ ຈາກມື້ສ້າງຕັ້ງ 387 MW ມາເປັນ 1.131 MW ໃນປະຈຸບັນ ແລະ ມີທຶນຈົດທະບຽນທັງໝົດ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ.

ຈາກການດຳເນີນງານ 5 ປີ ຜ່ານມາ ຜ-ຟຟລ ສາມາດຜະລິດກະແສໄຟຟ້າທັງໝົດໄດ້ 9.981,19 GWh ສ້າງລາຍຮັບຈາກການຂາຍກະແສໄຟໄດ້ 4.211,02 ຕື້ກີບ ແລະ ໄດ້ກາຍເປັນບໍລິສັດມະຫາຊົນລາຍດຽວທີ່ສາມາດເຂົ້າຫາແຫລ່ງທຶນທັງຮູບແບບອອກຮຸ້ນສາມັນ ແລະ ອອກພັນທະບັດ ທັງພາຍໃນ ແລະ ຕ່າງປະເທດ.

ພວກເຮົາໃຫ້ຄວາມສຳຄັນໃນການກໍ່ສ້າງ ແລະ ສົ່ງເສີມຄວາມສາມາດ ຂອງ ພະນັກງານທຸກລະດັບ ພັດທະນາພະນັກງານໃຫ້ມີຄວາມຮູ້ຄວາມສາມາດ, ມີຈັນຍາບັນ ແລະ ມີຄວາມຮັບຜິດຊອບສູງຕໍ່ວຽກງານ; ກໍ່ສ້າງພະນັກງານທີ່ໜຸ່ມນ້ອຍລຸ້ນສືບທອດ ເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວ ຂອງ ບໍລິສັດໃນອານາຄົດ. ນອກຈາກນັ້ນ ຜ-ຟຟລ ໄດ້ເອົາໃຈໃສ່ຕໍ່ການພັດທະນາຊຸມຊົນ, ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

ຄຽງຂ້າງກັບການດຳເນີນທຸລະກິດຢ່າງຕັ້ງໜ້າ, ຜ-ຟຟລ ກໍ່ໄດ້ປະຕິບັດພັນທະທີ່ມີຕໍ່ລັດຖະບານຢ່າງສະເໜີຕົ້ນສະເໜີປາຍບໍ່ວ່າຈະຢູ່ໃນຮູບແບບຄ່າພາກຫລວງ, ອາກອນຕ່າງໆ ຊຶ່ງມີຕົວເລກບໍ່ຕ່ຳກວ່າ 458,08 ຕື້ກີບ.

ຈາກຜົນງານທີ່ໄດ້ກ່າວມາຂ້າງເທິງນັ້ນ, ເຮັດໃຫ້ ຜ-ຟຟລ ໄດ້ຮັບການເຊື່ອຖືຈາກລັດຖະບານ, ນັກລົງທຶນ ແລະ ສະຖາບັນການເງິນທັງພາຍໃນແລະຕ່າງປະເທດ ໃນການສະໜັບສະໜູນແຫລ່ງທຶນເພື່ອດຳເນີນທຸລະກິດ, ໄດ້ຮັບການຢັ້ງຢືນການບໍລິຫານງານທີ່ມີມາດຕະຖານສາກົນ: ISO 9001-2008 QMS, ISO 14001-2014 EMS, ASEAN Best Practices Renewable Energy Projects Awards, Asia money Country Deals 2014 Awards ແລະ IFR Asia Awards 2015 Frontier Markets Issue.

ຂ້າພະເຈົ້າຂໍຕາງໜ້າຜູ້ບໍລິຫານ ແລະ ພະນັກງານ ຜ-ຟຟລ ຂໍສະແດງຄວາມຮູ້ບຸນຄຸນມາຍັງ ພັກ, ລັດ, ຜູ້ຖືຮຸ້ນທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ການຊີ້ນຳ, ສະໜັບສະໜູນ, ເຊື່ອໝັ້ນຕໍ່ການດຳເນີນທຸລະກິດ ຂອງ ບໍລິສັດ ຜ-ຟຟລ ພວກຂ້າພະເຈົ້າຈະທຸ້ມເທຄວາມຮູ້, ຄວາມສາມາດ ແລະ ປະສົບປະການທັງໝົດທີ່ມີຢູ່ເຂົ້າໃນການພັດທະນາທຸລະກິດຄວບຄູ່ກັບການຮັກສາສິ່ງແວດລ້ອມ ແລະ ສັງຄົມ ໃຫ້ເຕີບໂຕ ຂະຫຍາຍຕົວຢ່າງຍັ່ງຍືນ.

ຜູ້ອຳນວຍການໃຫຍ່

ບຸນອູ້ມ ສີວັນເພັ້ງ

Message from the Managing Director & CEO

On the 15th December 2010, EDL Generation Public Company was created with Ministry of Industry and Commerce with a registered capital of LAK 2,605,792,200,000 divided into 651,448,050 shares at LAK 4,000 per share. Subsequently, on the 7th January 2011 our company raised funds through our IPO by selling 217,149,000 shares in the Lao Securities Exchange, making our new registered capital increased to LAK 3,474,388,200,000 and having total shares of 868,597,050 shares. On 11th January 2011, EDL-Gen was officially listed on the Lao Securities Exchange (LSX).

Recently, EDL-Gen is leading corporate in the electricity generation, specifically hydro power in the Lao PDR, and the Company has a plan to increase the capacity from 387 MW in 2010 to 2,400 MW by 2020 in order to supply the rising demand locally and to our neighboring countries. In the year 2015, the Company accomplished its four rounds raised fund to purchase hydropower projects which owned by EDL and shares of Independent Power Producers (IPPs) from EDL, including the project construction completed and under the construction, which increased the total installed capacity of the Company on established day from 387 MW to 1,131 MW. The registered capital of the Company increased to LAK 6,717,214,788,000 and the total share grew up to 1,679,303,697 shares.

From the business operations over the past 5 years, EDL-Gen was able to generate the electricity with the total 9,981.19 GWh, the major revenue from selling energy was 4,211.02 Billion Kip and became a public company that can only access to the source of funds, both the ordinary shares and corporate debenture issuance in domestic and foreign.

We focus on building and promote the knowledge at every level development of stuffs, personal skills, ethical and high responsibility; making young generations to growth of the Company in the future. Furthermore, EDL-Gen also pay attention to the development community, a responsibility to social and the environmental.

Besides of the business operations, EDL-Gen had the performance obligation on the government to constantly in royalty fee, tax, which figures are no less than 458.08 Billion Kip.

As the performance mentioned above, EDL-Gen has reflected the confidence and trust by the government, investors and financial institutions in both domestic and foreign, to support source of funds to run the business and EDL-Gen was awarded on Quality Management System (QMS) as the International Standards: ISO 9001:2008 QMS, ISO 14001-2014 EMS, ASEAN Best Practices Renewable Energy Projects Award, Asia Money Country Deals 2014 Awards and Asia (IFR Asia) Award 2015 for Frontier Markets Issue.

On behalf of the Managing Director and staffs of EDL-Gen, I would like to appreciate and express my sincere to the party, government, shareholders in both domestic and foreign for continued support and cooperation which have significantly contributed to our successful operations and we will firmly committed to dedicated talent and experiences to develop the business along with maintaining the environment.

Managing Director



Boun Oum SYVANPHENG







I. ເງື່ອນໄຂ ແລະ ການສ້າງຕັ້ງບໍລິສັດ

ປະຕິບັດຕາມນະໂຍບາຍຂອງລັດຖະບານໃນການປັບປຸງໂຄງສ້າງທຸລະກິດຂອງຂະແໜງອຸດສະຫະກຳພະລັງງານໃນ ສປປ ລາວ, ແນ່ໃສ່ ເພື່ອເຮັດໃຫ້ຂະແໜງພະລັງງານ ມີຄວາມເຕີບໃຫຍ່ຂະຫຍາຍຕົວ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການພາຍໃນປະເທດ ແລະ ຕະຫຼາດພະລັງງານນອກປະເທດ ເຊິ່ງນັບມື້ນັບສູງຂຶ້ນ. ລັດວິສາຫະກິດໄຟຟ້າລາວ (ຟຟລ) ເປັນບໍລິສັດຂອງລັດທີ່ມີໜ້າທີ່ດຳເນີນທຸລະກິດໃນການຜະລິດ, ຂົນສົ່ງ ແລະ ຈຳໜ່າຍພະລັງງານໄຟຟ້າຈຶ່ງໄດ້ເລີ່ມສຶກສາຄວາມເປັນໄປໄດ້ ໃນການປັບປຸງໂຄງສ້າງຂອງຕົນເອງ ແນ່ໃສ່ໃຫ້ການດຳເນີນທຸລະກິດ ໃຫ້ມີຄວາມຄ່ອງຕົວຂຶ້ນ.

ຈາກຜົນການສຶກສາຄວາມເປັນໄປໄດ້ ໃນປີ 2010 ຟຟລ ຈຶ່ງໄດ້ຕັດສິນໃຈຫັນເອົາຝ່າຍຜະລິດຂອງ ຟຟລ ມາເປັນທຶນຮອນສ້າງໃນການສ້າງຕັ້ງ ບໍລິສັດຜະລິດ-ໄຟຟ້າລາວຂຶ້ນ, (ຜ-ຟຟລ), ແນ່ໃສ່ເພື່ອລະດົມທຶນເຂົ້າໃນການຂະຫຍາຍແຫຼ່ງຜະລິດພະລັງງານໄຟຟ້າໃນທົ່ວປະເທດ.

ພາຍໃຕ້ການຊີ້ນຳຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ຄະນະກຳມະການວິຊາການ ເພື່ອກະກຽມມາສ້າງຕັ້ງ ຜ-ຟຟລ. ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງປະກອບດ້ວຍບັນດາຄະນະກຳມະການຈາກຫຼາຍກະຊວງທີ່ກ່ຽວຂ້ອງເຂົ້າຮ່ວມ. ຄະນະກຳມະການດັ່ງກ່າວມີໜ້າທີ່ສຳຄັນໃນການຂໍຫຼຸດຜ່ອນ ຫຼື ຍົກເວັ້ນບາງຂໍ້ທີ່ກຳນົດ, ມາດຕາຂອງດຳລັດ ແລະ ກົດໝາຍຕ່າງໆ ຈາກສະພາແຫ່ງຊາດເພື່ອໃຫ້ວຽກງານການສ້າງຕັ້ງດັ່ງກ່າວ ສາມາດຈັດຕັ້ງປະຕິບັດໄດ້ຕາມຄາດໝາຍພ້ອມໆ ກັບວັນເປີດຕະຫຼາດຫຼັກຊັບລາວ.

I. The Establishment of EDL-Generation Public Company

According to policies of Lao government on business development in energy industry of Laos, also expansion of energy sectors and responsibility on energy demand in energy market nationally and internationally, Electricité Du Laos (EDL) commenced the research in restructuring its self as a means of enhancing its business operation. EDL is a government company which operates in the generation, transmission, and distribution of electricity.

As the result of the research, EDL decided to separate its generation department as a company named EDL-Generation Public Company (EDL-Gen) and established the company in 2010. The main purpose of the establishment of EDL-Gen is to fundraise for energy generation expansion.

Under the direction of Lao Security Commission Office, A committee of EDL-Gen Promoter was found. The members of the committee were included from relevant entities. One of the important duties of the committee was to request for waivers or exemptions from Lao national assembly regarding on regulations, decrees and laws as a mean of supporting the founding of EDL-Gen Company.



ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ສປປ ລາວ ຕູ້ ປ.ນ: 2392, ໂທລະສັບ: (+856 21) 316142, ແຟັກ: (+856 21) 316141
E-mail: edlgenhq@edlgen.com.la, wabsite: edlgen.com.la


NAM 3 HPP











II. ປະຫວັດຄວາມເປັນມາຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດ ມາໃຫ້ ຜ-ຟຟລ,ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ1, ເຂື່ອນໄຟຟ້າ ເຊເສັດ 2, ເຂື່ອນໄຟຟ້ານ້ຳເລິກ, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້າ ເຊເສັດ 1, ເຂື່ອນໄຟຟ້ານ້ຳຊອງ ແລະ ເຂື່ອນໄຟຟ້າແຊລະບໍ ລວມມີ ກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ ເຂື່ອນທັງໝົດ ແລະພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ່ມທຶນດ້ວຍການອອກຮຸ້ນຄັ້ງທຳ ອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນII ໃຫ້ນັກລົງ ທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນ ຂອງ ນັກລົງທຶນພາຍໃນ ແລະ ຕ່າງ ປະເທດ.

ໃນກາງ ປີ 2012 ບໍລິສັດໄດ້ອອກຮຸ້ນສາມັນເພີ້ມທຶນຄັ້ງທີ II ເພື່ອລະດົມທຶນໄປຊື້ເອົາຮຸ້ນ ຂອງ ຟຟລ ໃນ 4 ໂຄງການເຂື່ອນຜະ ລິດໄຟຟ້າເອກະລາດ ລວມກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດ ສ່ວນການຖືຮຸ້ນ) ເຮັດໃຫ້ ຜ-ຟຟລ ມີກຳລັງຕິດຕັ້ງທັງໝົດ 881 MW ແລະ ມີທຶນຈົດທະບຽນເປັນເງິນ 4.904.867.060.000 ກີບ ແລະ ມີ ຮຸ້ນທັງໝົດ 1.226.216.765 ຮຸ້ນ.

ໃນທ້າຍ ປີ 2014, ຜ-ຟຟລ ໄດ້ລະດົມທຶນດ້ວຍການອອກຈຳ ໜ່າຍຮຸ້ນກູ້ໃນຕະຫລາດຫລັກຊັບແຫ່ງປະເທດໄທ ແລະ ທ້າຍ ປີ 2015 ບໍລິ ສັດ ໄດ້ອອກຮຸ້ນເພີ້ມທຶນເປັນຄັ້ງທີ III ເພື່ອນຳເງິນໄປຊື້ ແລະ ລົງທຶນໃນໂຄງການ ເຂື່ອນຜະລິດໄຟຟ້າ ຂອງ ຟຟລ ແລະ ຊື້ເອົາຮຸ້ນ ຂອງ ຟຟລ ໃນບັນດາເຂື່ອນຜະລິດໄຟຟ້າເອກະລາດ ທີ່ກຳລັງດຳເນີນ ການກໍ່ສ້າງຢູ່ ຈຳນວນ 20 ໂຄງການ ລວມກຳລັງຕິດຕັ້ງປະມານ 778 MW.

ປີ 2015 ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 ກຳລັງ ຕິດ 18 MW (ຕາມຊັດສ່ວນການຖືຮຸ້ນ) ແລະ ໄດ້ຮັບໂອນບັນເຂື່ອນ ໄຟຟ້າ ຂອງ ຟຟລ 3 ແຫ່ງ (ເຂື່ອນໄຟຟ້ານ້ຳຄານ 2, ເຂື່ອນໄຟຟ້າຫ້ວຍ ລຳພັນໃຫຍ່ ແລະ ເຂື່ອນໄຟຟ້ານ້ຳສະນາ) ລວມກຳຕິດຕັ້ງ 250 MW, ເຮັດໃຫ້ ບໍລິສັດ ຜ-ຟຟລ ໃນປະຈຸບັນມີກຳລັງຕິດຕັ້ງທັງໝົດ 1.131 MW ແລະ ມີທຶນຈົດທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

II. History of EDL-Generation Public Company.

The EDL-Generation Public Company (EDL-Gen) was incorporated as a public company with limited liability on 15 December 2010 through a spin off from Electricité Du Laos (EDL) where EDL's generation assets were transferred to the company including Nam Ngum 1, Xeset 2, Nam Leuk, Nam Mang 3, Xeset 1, Nam Song and Selabam hydropower plants, with a installed capacity of 387 MW. The technical staffs, who are working for the hydropower plants and some employees at EDL headquarter, have been transferred to EDL-Gen.

In the beginning, EDL-Gen has a registered capital with the total of 2,605,792,200,000 Kip or 651,448,050 in shares (4,000 Kip per share). EDL-Gen has approved the increase of its capital to 217,149,000 shares for the initial public offering (IPO). On 7 January 2011, the company had the registered capital with the total of 3,474,388,200,000 Kip, which amounts to 868,597,050 shares. On 11 January 2011, EDL-Gen was officially listed on the Lao Securities Exchange (LSX) Shareholders structure of EDL-Gne contained EDL 75% and public investors.

In middle of the year 2012, the Company was issued the 2nd ordinary shares to increase company's registered capital, fund raising through investment by purchase shares of EDL in 4 Independent Power Producers (IPPs) with the total installed capacity of 494 MW (in proportion to the shareholding). Thus, EDL-Gen has the total installed capacity of 881 MW and the company registered capital increased to 4,904,867,060,000 Kip and the total share grew up to 1,226,216,765 shares.

In the end of the year 2014, EDL-Gen has successful fundraising through investment by the corporate debenture issuance (Thai Baht) in Stock Exchange of Thailand and the end of the year 2015 the Company was issued the 3rd ordinary shares to increase company's registered capital, fundraising through investment by purchase and invest in EDL's hydropower projects and shares in Independent Power Producers (IPPs) which EDL shared in, the total projects are under constructing 20 projects with the total installed capacity of 778 MW.

In the year 2015, EDL-Gen has successful share transferred of Nam Ngum 5 Hydropower Project with an installed capacity of 18 MW (in proportion to the shareholding) and 3 hydropower projects from EDL (Nam Khan 2 Hydropower Project, Houay Lamphan Gnai Hydropower Project and Nam Sana Hydropower Project) with the total installed capacity of 250 MW. Recently, EDL-Gen has the total installed capacity of 1,131 MW and the company registered capital increased to 6,717,214,788,000 Kip and the total shares increased to 1,679,303,697 shares. (with the same proportion to the shareholding).



III. ເປົ້າໝາຍຫຼັກຂອງການດຳເນີນ ທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງ ລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນແຜນໄວ້ແລ້ວ ຫຼື ລົງທຶນ ດ້ວຍການເຂົ້າຖືຮຸ້ນທັງໝົດຫລືບາງສ່ວນແທນ ຟຟລ ໃນບັນດາໂຄງ ການຜູ້ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operatorion & Maintennance Service) ໃຫ້ແກ່ບັນດາໂຄງການ ຜະລິດໄຟຟ້າຕ່າງໆໃນຂອບເຂດທົ່ວປະເທດ.



ວິໄສທັດ

1. ເປັນບໍລິສັດນຳໜ້າອັນດັບໜຶ່ງ ຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານໄຟຟ້າຢ່າງພຽງພໍ ແລະ ທັນການ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.
2. ເປັນບໍລິສັດທີ່ຈະປະກອບສ່ວນຢ່າງແຂງແຮງສ້າງໃຫ້ ສປປ ລາວ ກາຍເປັນໜ້ໍໄຟຂອງອາຊຽນ ແລະ ປະກອບສ່ວນຢ່າງເຕັມກຳລັງ ເພື່ອເຮັດໃຫ້ຂົງເຂດອາຊຽນມີຄວາມໝັ້ນຄົງທາງດ້ານພະລັງງານ ໄຟຟ້າຢ່າງຍືນຍົງ.

III. The Core Business Operation

1. To generate and sell (wholesale) electricity to EDL as well as construct the transmission lines and substations as necessary.
2. To invest in the generation assets, which are constructed and planned by EDL or the shares wholly owned or partially owned by EDL in the EDL's IPPs.
3. To provide operation and maintenance services to other power generation projects in Lao PDR.



Vision


1. To be a number one leading company in Lao PDR in ensuring a reliable electric power supplier for the socio-economic development of Lao PDR.
2. To be a company which strongly contributes to the realization of Lao PDR's vision of being a battery of ASEAN in order to contribute and ensure sustainable and reliable power supplier to ASEAN community.














ພາລະກິດ

1. ເປັນບໍລິສັດນຳໜ້າອັນດັບໜຶ່ງໃນການດຳເນີນທຸລະກິດຜະລິດໄຟຟ້າເພື່ອຮັບໃຊ້ພາຍໃນປະເທດ ແລະ ພາຍໃນຂົງເຂດພາກພື້ນດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.
2. ຍືນຄຽງຄູ່ ແລະ ສົມທົບຢ່າງສະໜິດແໜ້ນກັບ ລັດວິສາຫະກິດໄຟຟ້າລາວຮ່ວມຮັກສາຄວາມໝັ້ນຄົງທາງດ້ານພະລັງງານ ບໍ່ວ່າທາງດ້ານປະລິມານກຳຄຸນນະພາບ ເພື່ອສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນຂອບເຂດທົ່ວປະເທດ ແລະ ໃນຂົງເຂດອາຊຽນ.
3. ຕັ້ງໜ້າຍົກສູງ ແລະ ພັດທະນາຄຸນສົມບັດ ແລະ ຄວາມສາມາດຂອງພະນັກງານຂອງບໍລິສັດ ໃນທຸກລະດັບໃຫ້ມີຄວາມກ້າວໜ້າ ແລະ ມີສ່ວນຮ່ວມໃນການຂະຫຍາຍ ແລະພັດທະນາບໍລິສັດດ້ວຍຄວາມຮູ້ສຶກທີ່ພາກພູມໃຈ, ມີຄວາມຮັບຜິດຊອບ ແລະ ເປັນເຈົ້າຂອງ.


Mission

1. To be a number one leading company in electricity generating business to provide Lao PDR and neighboring nations, with sustainable power at a reasonable prices and to create the shareholder's value.
2. To stand side by side with EDL and coordinate closely with EDL in order to maintain power reliability and effectively respond to the needs of the social and economic development of Lao PDR as well as the ASEAN nations.
3. To upgrade and train its staff, so that they can actively participate in the development of the company with pride, responsibility and ownership.

ໂຄງສ້າງທຸລະກິດຂອງ ຜ-ຟຟລ
Business Structure of EDL-Gen



IV. ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ
IV. Organization chart and Management



ຈຳນວນບຸກຄະລາກອນຂອງ ຜ-ຟຟລ **ມີທັງໝົດ 478 ຄົນ.**
EDL-Gen consists of **478 staffs.**

ຄະນະສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Gen's Board of Directors



ທ່ານ ດຣ ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ
Dr. Khammany INTHIRATH
Chairman



ທ່ານ ສີສະຫວາດ ທິຣະວົງ
ຮອງປະທານສະພາບໍລິຫານ
Mr. Sisavath THIRAVONG
Vice Chairman



ທ່ານ ບຸນອູ້ມ ສີວັນເພັ້ງ
ຜູ້ອຳນວຍການ
Mr. Boun Oum SYVANPHENG
Director



ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການ
Mrs. Rattana PRATHOUMVAN
Director



ທ່ານ ບຸນມາ ມະນີວົງ
ຜູ້ອຳນວຍການ
Mr. Bounma MANIVONG
Director



ທ່ານ ນາງ ວານິດາ ສະຫວັດດີ
ຜູ້ອຳນວຍການ
Mrs. Vanida SAVADDY
Director



ທ່ານ ສີຈາດ ບຸດຊາກິດຕິລາດ
ຜູ້ອຳນວຍການ
Mr. Sychath BOUTSAKITIRATH
Director



ຮສ.ດຣ ກອງສີ ແສງມະນີ
ຜູ້ອຳນວຍການອິດສະຫຼະ
Assoc. Prof Dr. Kongsy SENGMANY
Independent Director



ສຈ.ດຣ ຄຳລືຊາ ນວນສະຫວັນ
ຜູ້ອຳນວຍການອິດສະຫຼະ
Prof Dr. Khamlusa NOUANSAVANH
Independent Director



ຮສ. ຄຳເຜີຍ ພົມມະຈັນ
ຜູ້ອຳນວຍການອິດສະຫຼະ
Assoc. Prof.Khampheui PHOMACHANH
Independent Director

ຄະນະຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
Managing Directors of EDL-Gen



ທ່ານ ບຸນອູ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
Mr. Boun Oum SYVANPHENG
Managing Director (CEO)



ທ່ານ ນ. ລັດຕະນາ ປະທຸມວັນ
ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ
Mrs. Rattana PRATHOUMVAN
Deputy Managing Director (COO)



ທ່ານ ດຣ ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ
Dr. Bounsalong SOUTHIDARA
Deputy Managing Director (CFO)

V. ການພັດທະນາຊັບພະຍາກອນມະນຸດຂອງ ຜ-ຟຟລ.
Human Resource Development

1.ລະດັບການສຶກສາ
1. Education level

ຊັ້ນການສຶກສາ / Education level	2011	2012	2013	2014	2015
ທຽບເທົ່າຊັ້ນຕົ້ນ/E Lower Dip	-	-	19	22	21
ຊັ້ນຕົ້ນ / Lower Diploma	47	39	47	35	35
ຊັ້ນກາງ / Middle Diploma	102	97	94	96	9
ຊັ້ນສູງ / Higher Diploma	139	138	134	127	142
ປະລິນຍາຕີ / Bachelor	94	109	116	140	157
ປະລິນຍາໂທ / Master	18	22	27	30	31
ປະລິນຍາເອກ / PhD	1	1	1	1	1
ລວມທັງໝົດ / Total	401	406	438	451	478







2. ການຝຶກອົບຮົມຂອງ ຜ-ຟຟລ

ຕະຫຼອດ 5 ປີ ຜ່ານມານັ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນ ໂດຍການສົ່ງພະນັກງານບໍລິສັດ ແຕ່ລະດັບສູງຈົນຮອດພະນັກງານທົ່ວໄປເຂົ້າເຝິກອົບຮົມທັງພາຍໃນ ແລະ ຕ່າງປະເທດຕາມຄວາມເໝາະສົມເຊັ່ນ: ການເງິນທຸລະກິດ ກັບຕະຫຼາດຫຼັກຊັບສຳລັບຜູ້ບໍລິຫານ, Project Financing and Arbitration, Generation and Renewable Energy, Hydropower and the Environment; Regional SEA Course 2014 ແລະ ນະໂຍບາຍ ແລະ ມາດຕະຖານການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມສັງຄົມແບບຍືນຍົງ IFC.

2. EDL-Gen Training

EDL-Gen has been caring for Human resource development and sent all level of staff to attend training program locally and abroad. The training programs are as follows: Financial business for management from Lao security exchange company, Project Financing and Arbitration, Generation and Renewable energy, Hydropower and the environment, and IFC Performance Standard.




Team Work and Key Leadership Skills








TMA

VI. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.

ຜ-ຟຟລ ໄດ້ດຳເນີນທຸລະກິດໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໃນຂະນະດຽວກັນຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງກັບລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບ ບໍລິສັດມະຫາຊົນທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງຜົນການດຳເນີນທຸລະກິດສາມາດສັງລວມໄດ້ດັ່ງນີ້:

VI. The Business Operation and The Business Operating Result


EDL-Generation Public Company generates and wholesale electricity to the EDL, as well as to improve administration in accordance with the rules and laws about the company public listed in the Lao Securities Exchange other operating results, business can be summarized as follows:





1. ວຽກງານການຜະລິດ, ການຈຳໜ່າຍ ແລະ ການບໍລິຫານນ້ຳ
1. Power Generation, Selling Energy and Water Management

1.1 ທີ່ຕັ້ງຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ຜູ້ຜະລິດເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ.
1.1 The locations of Hydropower Plants hold 100% by EDL-Gen and IPPs Shared by EDL-Gen has shares.



IPPs

EDL-Gen's HPP

1.2 ການຜະລິດພະລັງງານໄຟຟ້າ ແຕ່ປີ 2011- 2015
Power Generation from 2011-2015

ການຜະລິດພະລັງງານໃນໄລຍະ 5 ປີ/Power generation (5 Years) 2011-2015	
	ຫົວໜ່ວຍ/Unit: GWh
ເຂື່ອນໄຟຟ້ານ້ຳງື່ມ-1/Nam Ngum 1 HPP	5.766
ເຂື່ອນໄຟຟ້າເຊເສັດ-2/Xe Set 2 HPP	1.228
ເຂື່ອນໄຟຟ້ານ້ຳເລິກ/Nam Leuk HPP	1.074
ເຂື່ອນໄຟຟ້ານ້ຳມັງ-3/Nam Mang 3 HPP	852
ເຂື່ອນໄຟຟ້າເຊເສັດ-1/Xe Set 1 HPP	911
ເຂື່ອນໄຟຟ້ານ້ຳຊອງ/Nam Song HPP	39
ເຂື່ອນໄຟຟ້າເຊລະບໍ/Se Labam HPP	123
ລວມທັງໝົດ/Total	9.995

ໝາຍເຫດ: ເຂື່ອນໄຟຟ້ານ້ຳຄານ 2, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ແລະ ເຂື່ອນໄຟຟ້ານ້ຳສະນາ ແມ່ນໂອນມາທ້າຍ ປີ 2015
Remark: Nam Khan 2 HPP, Houay Lamphan Gnai HPP and Nam Sana HPP ware transferred at the end of 2015

1.3 ການຈຳໜ່າຍພະລັງງານ ແຕ່ ປີ 2011- 2015 /
Selling Energy from 2011-2015

ການຈຳໜ່າຍພະລັງງານໃນໄລຍະ 5 ປີ / Energy Sale (5 Years) 2011-2015	
	ຫົວໜ່ວຍ/Unit: GWh
ເຂື່ອນໄຟຟ້ານ້ຳງື່ມ-1/Nam Ngum 1 HPP	5.713
ເຂື່ອນໄຟຟ້າເຊເສັດ-2/Xe Set 2 HPP	1.211
ເຂື່ອນໄຟຟ້ານ້ຳເລິກ/Nam Leuk HPP	1.047
ເຂື່ອນໄຟຟ້ານ້ຳມັງ-3/Nam Mang 3 HPP	832
ເຂື່ອນໄຟຟ້າເຊເສັດ-1/Xe Set 1 HPP	891
ເຂື່ອນໄຟຟ້ານ້ຳຊອງ/Nam Song HPP	38
ເຂື່ອນໄຟຟ້າເຊລະບໍ/Se Labam HPP	120
ລວມທັງໝົດ/Total	9.852

ໝາຍເຫດ: ເຂື່ອນໄຟຟ້ານ້ຳຄານ 2, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ແລະ ເຂື່ອນໄຟຟ້ານ້ຳສະນາ ແມ່ນໂອນມາທ້າຍ ປີ 2015
Remark: Nam Khan 2 HPP, Houay Lamphan Gnai HPP and Nam Sana HPP ware transferred at the end of 2015

1.4 ການບໍລິຫານຈັດການນ້ຳ

ເພື່ອເຮັດໃຫ້ການດຳເນີນທຸລະກິດຜະລິດພະລັງງານ ແລະ ໃຫ້ສອດຄ່ອງກັບນະໂຍບາຍຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ຜ-ຟຟລ ໄດ້ເອົາໃຈໃສ່ໃນການບໍລິຫານ ຈັດການນ້ຳເຂົ້າໃນການຜະລິດໃຫ້ໄດ້ປະສິດທິຜົນສູງສຸດ. ເພື່ອເຮັດໃຫ້ການຜະລິດພະລັງໄຟຟ້າບັນລຸຕາມແຜນການທີ່ ຜ-ຟຟລ ວາງອອກ ແລະ ຮັບປະກັນການສະໜອງພະລັງງານ ໃຫ້ມີຄວາມສະຖຽນລະພາບສູງສຸດໃນແຕ່ລະປີ.

ດັ່ງນັ້ນ ທາງ ຜ-ຟຟລ ໄດ້ມີການຈັດໜ້າວຽກ, ມີການວາງແຜນການດັ່ງລຸ່ມນີ້:

- ວາງແຜນການສ້ອມແປງຈັກປະຈຳປີ (Plan outage) ແລະ Major Overhaul
- ວາງແຜນການກ່ຽວກັບ Force Outage
- ນຳເອົາຂໍ້ມູນກ່ຽວກັບປະລິມານນ້ຳໄຫຼເຂົ້າອ່າງໃນຫຼາຍປີຜ່ານມາ, ເພື່ອມາສ້າງເປັນແຜນການຜະລິດຂອງແຕ່ລະປີ ແລະ ຂອງແຕ່ລະເດືອນຂອງປີຕໍ່ໄປ.
- ປະສານສົມທົບກັບເຂື່ອນຕ່າງໆ ໃນການປ່ອຍນ້ຳເຂົ້າອ່າງ.
- ມີການປະສານສົມທົບກັບສູນ ກ່ຽວກັບການຜະລິດພະລັງງານໃນແຕ່ລະເດືອນ.

1.4 Water Management

To operate the power generation business harmonize with the policy of Ministry of Energy and Mines, EDL-Gen has significantly concentrated on water management for operation to ensure that the power generation has achieved EDL-Gen action plan and the power supply has been sufficient each year.

Thus, EDL-Gen has organized with the following plans:


- Annual plan of plan outage and overhaul
- Planed Force Outage
- Correct information on the volume of water flowing data into the reservoir over the years, to create a production plan in each year and each month for the next year.
- Coordination with hydropower plans to release water into the reservoir.
- Coordination center to produce energy each month.





1.5 ການຜະລິດ ຂອງ ເຂື່ອນຜູ້ຜະລິດໄຟຟ້າເອກະລາດ (ຕາມຊັດສ່ວນການຖືຮຸ້ນ)
Power Generation of IPPs share by EDL-Gen

ລາຍການລະອຽດ / Detail	2012	2013	2014	2015
ເຂື່ອນໄຟຟ້າເທີນຫິນບູນ / TheunHinBoun	462	2.007	1.961	1.519
ເຂື່ອນໄຟຟ້ານ້ຳງື່ມ 2 / Nam Ngum 2	211	578	529	480
ເຂື່ອນໄຟຟ້າຫ້ວຍເຮົາ / HouayHo	43	66	122	65
ເຂື່ອນໄຟຟ້ານ້ຳງື່ມ 5 / Nam Ngum 5				78
ເຂື່ນໄຟຟ້ານ້ຳລິກ 1-2 / Nam Lik 1-2	25	54	53	51
ລວມທັງໝົດ / Total	740	2.705	2.665	2.193

ໝາຍເຫດ: ປີ 2012 ຕົວເລກການຜະລິດແຕ່ເດືອນ 8 - 12
Remark : The generation in 2012 inclded only generation from August to December





2. ວຽກບຳລຸງຮັກສາ ແລະ ສ້ອມແປງ
Operation and Maintenance

2.1. ເຂື່ອນໄຟຟ້ານ້ຳງື່ມ 1 / Nam Ngum 1HPP





2.1. ເຂື່ອນໄຟຟ້າເຊເສັດ 1-2 / Xe Set 1-2 HPP





2.3. ເຂື່ອນໄຟຟ້ານ້ຳເລິກ / Nam Leuk HPP





2.4. ເຂື່ອນໄຟຟ້ານ້ຳມັງ 3 / Nam Mang 3 HPP





2.5. ເຂື່ອນໄຟຟ້ານ້ຳຊອງ / Nam Song HPP





2.6. ເຂື່ອນໄຟຟ້າແຊລະບຳ / Selabum HPP





VII. ການຂະຫຍາຍ ແລະ ພັດທະນາທຸລະກິດ.

ໃນໄລຍະ 5 ປີ ຜ-ຟຟລ ສາມາດເພີ່ມກຳລັງຕິດຕັ້ງຈາກເດີມ 387 MW ເປັນ 899 MW ຊຶ່ງໃນ ປີ 2012 ໄດ້ຊື້ເອົາຮຸ້ນຂອງ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ຊຶ່ງປະກອບມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລິກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງເພີ່ມ 881 MW ແລະ ມາຮອດ ປີ 2015 ຜ-ຟຟລ ໄດ້ຊື້ເອົາຮຸ້ນຂອງເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ກຳລັງຕິດຕັ້ງ ຂອງ ຜ-ຟຟລ ເພີ່ມຂຶ້ນເປັນ 899 MW. ໃນທ້າຍ ປີ 2015 ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ຈາກ ຟຟລ ເຮັດໃຫ້ ກຳລັງຕິດຕັ້ງ ຂອງ ຜ-ຟຟລ ເພີ່ມຂຶ້ນເປັນ 1.131 MW.

VII. Business Expansion and Development

EDL-Gen has been operating for 5 years and increased installed capacity of its hydropower plants from 387 MW to 899 MW. In 2012, EDL-Gen purchased shares of four Independent Power Producers (IPPs) from EDL. The detail of shares of the four IPPs as follows: 60% of shares in Theun Hinboun hydropower plant, 25% of shares in Nam Ngum 2 hydropower plant, 20% of shares Houay Ho hydropower plant and 10% of shares in Nam Lik 1-2 hydropower plant. The total installed capacity of these four IPPs is 494 MW, increasing EDL-Gen's installed capacity of 881. After that, in 2015, EDL-Gen purchased 15 % of shares in Nam Ngum 5 hydropower plant which the EDL-Gen's installed capacity increased by 18 MW and grew up to 899 MW. At the end of 2015 EDL-Gen Completed of asset transfer of Nam Khan 2 HPP (130 MW), Houay Lamphan Gnai HPP (88 MW) and Nam Sana HPP (14 MW) from EDL. As a result, EDL-Gen total installed capacity increased to 1,131 MW.

















VIII. ພາກການເງິນ

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານທຶນຮອນຢ່າງພຽງພໍ ແລະ ທັນການ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດການຂະຫຍາຍຕົວຂອງບໍລິສັດ, ຜ-ຟຟລ ໄດ້ດຳເນີນການຄົ້ນຄວ້າຊອກຫາແຫຼ່ງທຶນ ເພື່ອລະດົມທຶນຮອນອັນຈຳເປັນ ໂດຍອີງໃສ່ຄວາມສາມາດຂອງຕົນ ແລະ ໂອກາດໃນຕະຫຼາດທຶນຂອງ ສປປ ລາວ. ເນື່ອງຈາກເປັນບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ຜ-ຟຟລ ສາມາດລະດົມທຶນໂດຍກົງຈາກມະຫາຊົນ ໂດຍການອອກຮຸ້ນເພີ່ມທຶນ ແລະ ການອອກຮຸ້ນກູ້ເພື່ອນຳໃຊ້ທຶນເຫຼົ່ານີ້ ເຂົ້າໃນການລົງທຶນເພື່ອການເຕີບໃຫຍ່ຂະຫຍາຍຕົວ ຂອງ ບໍລິສັດ.

ໃນເດືອນກໍລະກົດ ປີ 2012, ຜ-ຟຟລ ເປັນບໍລິສັດທຳອິດໃນຕະຫຼາດຫຼັກຊັບລາວ ທີ່ໄດ້ສຳເລັດການລະດົມທຶນຜ່ານການອອກຮຸ້ນສາມັນໃຫມ່ ລວມທັງໝົດ 357.619.715 ຮຸ້ນ ເພື່ອສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ (RightsOffering ຫຼື RO) ແລະ ສະເໜີຂາຍແກ່ມະຫາຊົນທົ່ວໄປ (Public Offering ຫຼື PO), ລວມທຶນທີ່ລະດົມໄດ້ທັງໝົດ 1.611,15 ຕື້ກີບ. ເງິນທຶນຈຳນວນນີ້ ໄດ້ຖືກນຳໃຊ້ເຂົ້າໃນການຊື້ຮຸ້ນຈາກ ລັດວິສາຫະກິດໄຟຟ້າລາວ (ຟຟລ) ໃນ 4 ບໍລິສັດຜູ້ຜະລິດໄຟຟ້າເອກະລາດ ຫຼື IPP ເຊິ່ງໄດ້ແກ່ ເຂື່ອນໄຟຟ້າເທີນຫິນບູນ, ຫ້ວຍເຫາະ, ນ້ຳງື່ມ 2 ແລະ ນ້ຳລີກ 1-2 ລວມກຳລັງຕິດຕັ້ງທັງໝົດຕາມຊັດສ່ວນຖືຮຸ້ນ ຈຳນວນ 494 ເມກາວັດ (MW), ເຮັດໃຫ້ກຳລັງຕິດຕັ້ງຂອງຜ-ຟຟລ ເພີ່ມຂຶ້ນຢ່າງກ້າວກະໂດດ ຈາກເດີມ 387 MW ມາເປັນ 881 MW. ນອກຈາກເຮັດໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວແລ້ວ, ການລົງທຶນໃນຮຸ້ນຂອງ 4 ໂຄງການ IPP ນີ້ ຍັງເຮັດໃຫ້ ຜ-ຟຟລ ສາມາດກະຈາຍແຫຼ່ງລາຍຮັບ ແລະ ໄດ້ຮັບເງິນປັນຜົນໃນສະກຸນເງິນຕາຕ່າງປະເທດອີກດ້ວຍ. ສະນັ້ນ ຍຸດທະສາດການຂະຫຍາຍທຸລະກິດ ໂດຍຜ່ານການນຳໃຊ້ກົນໄກຕະຫຼາດທຶນໃນຮູບແບບນີ້ ຈຶ່ງປະກອບສ່ວນເຮັດໃຫ້ຖານະການເງິນຂອງ ຜ-ຟຟລ ມີຄວາມເຂັ້ມແຂງ ແລະ ໝັ້ນຄົງຍິ່ງຂຶ້ນ.

ນອກຈາກການນຳໃຊ້ກົນໄກຕະຫຼາດທຶນຂອງ ສປປ ລາວ ແລ້ວ, ໃນໄລຍະຕໍ່ມາ ຜ-ຟຟລ ໄດ້ສືບຕໍ່ຄົ້ນຄວ້າຊອກຫາແຫຼ່ງທຶນເພີ່ມເຕີມ ເພື່ອສືບຕໍ່ຮອງຮັບການຂະຫຍາຍຕົວຂອງບໍລິສັດ. ອີງຕາມການຊີ້ນຳນຳພາໂດຍຄະນະນຳຂອງບໍລິສັດ, ຜ-ຟຟລ ໄດ້ລິເລີ່ມຈັດຕັ້ງແຜນການລະດົມທຶນຜ່ານການອອກຮຸ້ນກູ້ ໃນຕົ້ນປີ 2014. ພາຍຫຼັງທີ່ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໄດ້ຕົກລົງເຫັນດີອະນຸມັດໃຫ້ ຜ-ຟຟລ ອອກຈຳໜ່າຍຮຸ້ນກູ້ໃນປະເທດໄທ ແລະ ສປປ ລາວ ໃນເດືອນເມສາ 2014, ຜ-ຟຟລ ຮ່ວມກັບ ບໍລິສັດທີ່ປຶກສາ Twin Pine ຈຳກັດ ເຊິ່ງມີປະສົບການໃຫ້ຄຳປຶກສາແກ່ລັດຖະບານ ສປປ ລາວ ໃນການອອກຮຸ້ນກູ້ໃນປະເທດໄທມາແລ້ວເຖິງ 2 ຄັ້ງໃນປີ 2013, ໄດ້ຮ່ວມກັນວາງແຜນ ແລະ ດຳເນີນການລະດົມທຶນຜ່ານການອອກຮຸ້ນກູ້ສະກຸນເງິນບາດ ມູນຄ່າ 6.500 ລ້ານບາດ ໂດຍມີເງື່ອນໄຂສຳຄັນທຳອິດ ແມ່ນການເຮັດໃຫ້ບໍລິສັດ ໄດ້ຮັບການຈັດອັນດັບຄວາມໜ້າເຊື່ອຖື.

ການຈັດລຳດັບຄວາມໜ້າເຊື່ອຖືຂອງ ຜ-ຟຟລ ແມ່ນບົດພິສູດ ແລະ ການສ້າງຄວາມເຊື່ອໝັ້ນໃຫ້ແກ່ບັນດານັກລົງທຶນ ເຖິງຄວາມສາມາດລວມຂອງບໍລິສັດ ໃນການບໍລິຫານຈັດການທຸລະກິດຂອງຕົນ. ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນບໍລິສັດມະຫາຊົນທຳອິດໃນ ສປປ ລາວທີ່ໄດ້ຮັບການຈັດລຳດັບຄວາມໜ້າເຊື່ອຖື



ໂດຍບໍລິສັດ TRIS Rating ຈຳກັດໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມແລະລົງທຶນໄດ້.

ໂດຍສືບຕໍ່ຈາກຜົນການຈັດລຳດັບດັ່ງກ່າວ, ຜ-ຟຟລ ໄດ້ປະສານສົມທົບກັບທີ່ປຶກສາການເງິນ ແລະ ບັນດາ 3 ທະນາຄານຮ່ວມຈັດຈຳໜ່າຍຮຸ້ນກູ້ ເພື່ອດຳເນີນການພົບປະນັກລົງທຶນທີ່ປະເທດໄທ, ການປະຊາສຳພັນ ແລະ ສ້າງຄວາມຮູ້ຄວາມເຂົ້າໃຈກ່ຽວກັບບໍລິສັດໃຫ້ແກ່ສື່ມວນຊົນສາຍການເງິນ ແລະ ທຸລະກິດຈາກປະເທດໄທ ໃນຕົ້ນເດືອນພະຈິກ 2014, ສິ່ງຜົນເຮັດໃຫ້ການອອກຈຳໜ່າຍຮຸ້ນກູ້ປະສົບຜົນສຳເລັດຢ່າງໃຫຍ່ຫຼວງ. ຮຸ້ນກູ້ສະກຸນເງິນບາດຂອງ ຜ-ຟຟລ ໄດ້ຮັບການສັ່ງຈອງຊື້ຈາກບັນດານັກລົງທຶນ ເຖິງ 12.490 ລ້ານບາດ, ເຊິ່ງຫຼາຍກວ່າຈຳນວນທີ່ສະເໜີຂາຍເກືອບ 2 ເທົ່າຕົວ. ໃນວັນທີ 12/12/2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ຢ່າງເປັນທາງການ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ ຕາມເປົ້າໝາຍ. ທຶນຈຳນວນດັ່ງກ່າວນີ້ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມຈຳນວນ 392 MW ຜ່ານການຮັບໂອນໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 100 MW. ເມື່ອການຮັບໂອນບັນໂຄງການເຫຼົ່ານີ້ສຳເລັດ, ຜ-ຟຟລ ຈະມີກຳລັງຕິດຕັ້ງໄຟຟ້າທັງໝົດ 1.273 MW.

ການລະດົມທຶນຜ່ານການອອກຮຸ້ນກູ້ສະກຸນເງິນບາດ ໃນຕະຫຼາດທຶນຂອງປະເທດໄທຂອງ ຜ-ຟຟລ ໄດ້ຍົກສູງບົດບາດ ແລະ ຄວາມໜ້າເຊື່ອຖືຂອງ ຜ-ຟຟລ ໃນເວທີສາກົນ. ຄວາມສຳເລັດອັນຍິ່ງໃຫຍ່ດັ່ງກ່າວ ເຮັດໃຫ້ ຜ-ຟຟລ ໄດ້ຮັບລາງວັນ Asiamoney Country Deal of the Year 2014 Award ໃນວັນທີ 12/02/2015 ທີ່ປະເທດຮົງກົງ. ນອກຈາກນີ້, ຜ-ຟຟລ ຍັງໄດ້ຮັບລາງວັນໃນລະດັບພາກພື້ນເພື່ອຮັບຮູ້ຜົນສຳເລັດຂອງການອອກຮຸ້ນກູ້ດັ່ງກ່າວໄດ້ແກ່ International Financing Review Asia (IFR Asia) Award 2015 ໃນສາຂາ Frontier Markets Issue ໂດຍມີພິທີມອບຮັບລາງວັນທີ່ປະເທດຮົງກົງ ໃນວັນທີ 24 ກຸມພາ 2016. ຍິ່ງໄປກວ່ານັ້ນ, ຜ-ຟຟລ ໄດ້ກາຍເປັນວິສາຫະກິດທຳອິດໃນ 4 ກຸ່ມປະເທດສະມາ ຊິກອາຊຽນໃໝ່ (CLMV) ໄດ້ແກ່ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມທີ່ສາມາດເຂົ້າໄປລະດົມທຶນໃນຕະຫຼາດຮຸ້ນກູ້ຂອງປະເທດໄທ. ເຫດການນີ້ໄດ້ກາຍເປັນຂີດໝາຍປະຫວັດສາດສຳຄັນອັນໜຶ່ງໃນການເຊື່ອມໂຍງຕະຫຼາດທຶນຂອງອາຊຽນ ເພື່ອການເຕີບໃຫຍ່ໄປພ້ອມກັນ ແລະ ເປັນການ



ປະກອບສ່ວນອັນສຳຄັນຂອງ ຜ-ຟຟລ ໃຫ້ແກ່ການສ້າງປະຊາຄົມເສດຖະກິດອາຊຽນ ຫຼື AEC ໃຫ້ເປັນຮູບປະທຳໃນອະນາຄົດ.

ນອກຈາກນີ້, ຜົນສຳເລັດດັ່ງກ່າວ ຍັງເພີ່ມຂີດຄວາມສາມາດ ຂອງ ຜ-ຟຟລ ໃນການເຂົ້າເຖິງແຫຼ່ງທຶນ ໃນຕະຫຼາດເງິນ ທັງພາຍ ໃນ ແລະ ຕ່າງປະເທດ. ໃນປີ 2015 ຜ-ຟຟລ ສາມາດກູ້ຢືມເງິນ ຈາກທະນາຄານຕ່າງປະເທດລວມມູນຄ່າ 68 ລ້ານໂດລາສະຫະລັດ ໂດຍບໍ່ມີການຄ້ຳປະກັນຈາກລັດຖະບານ ຫຼື ຟຟລ. ເງິນທຶນເຫຼົ່ານີ້ແມ່ນຖືກນຳໃຊ້ເຂົ້າໃນໂຄງການສ້ອມແປງໃຫຍ່ ເຄື່ອງຈັກຂອງ ເຂື່ອນນ້ຳງື່ມ 1, ນ້ຳເລິກ ແລະ ນ້ຳມັງ 3 ຕາມແຜນການ. ການບຳ ລຸງຮັກສາພາຫະນະການຜະລິດດັ່ງກ່າວນີ້ ມີຄວາມສຳຄັນເພື່ອຮັບ ປະກັນການຜະລິດ ມີປະສິດທິພາບ ແລະ ສາມາດບັນລຸເປົ້າໝາຍ.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງແຂງແຮງ ແລະ ຕໍ່ເນື່ອງ, ໃນເດືອນກັນຍາ 2015 ຜ-ຟຟລ ຍັງໄດ້ສຳເລັດການ ອອກຮຸ້ນເພີ່ມທຶນ ຄັ້ງທີ III ໄດ້ຕາມເປົ້າໝາຍ, ເຮັດໃຫ້ລະດົມທຶນ ໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ ຈະຖືກນຳໃຊ້ ເຂົ້າໃນການຂະຫຍາຍກຳລັງຕິດຕັ້ງຂອງບໍລິສັດ ເພີ່ມຕື່ມຈຳນວນ 513,1 MW, ໃນນັ້ນ ລວມມີໂຄງການຜະລິດໄຟຟ້າທີ່ຈະຮັບໂອນ ຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນ ໃນຮຸ້ນຂອງ ຟຟລ ໃນບັນດາໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW, ແລະ ການຮ່ວມ ທຶນກັບເອກະຊົນໂດຍກົງອີກ 2 ໂຄງການ ລວມກຳລັງຕິດຕັ້ງຕາມ ສັດສ່ວນຖືຮຸ້ນ 126,9 MW. ພາຍຫຼັງການກໍ່ສ້າງ ແລະ ຄາດ ການຮັບໂອນສຳເລັດທັງໝົດໃນປີ 2018, ຜ-ຟຟລ ຈະມີກຳລັງຕິດ ຕັ້ງທັງໝົດປະມານ 1.786,1 MW.

ຜົນງານທີ່ ຜ-ຟຟລ ຍາດມາໄດ້ໃນແຕ່ລະໄລຍະທີ່ຜ່ານມາແມ່ນ ໝາກຜົນຂອງການຮ່ວມມືກັນຢ່າງກົມກຽວ ແລະ ສະໜິດ ແໜ້ນ ລະຫວ່າງ ຜ-ຟຟລ ກັບພາກສ່ວນຕ່າງໆ. ນອກຈາກທິດທາງອັນ ຖືກຕ້ອງ ແລະ ການຕັດສິນໃຈອັນເດັດດ່ຽວ ພາຍໃຕ້ການນຳພາ ຂອງສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ຂອງ ຜ-ຟຟລ ແລ້ວ, ຄວາມເຂົ້າອົກເຂົ້າໃຈຄວາມເອົາໃຈໃສ່ຢ່າງໃກ້ຊິດ ແລະ ການ ໃຫ້ຄວາມຮ່ວມມື ແລະ ສະໜັບສະໜຸນຢ່າງສະເໝີຕົ້ນສະເໝີປາຍ ຈາກບັນດາໜ່ວຍງານຄຸ້ມຄອງວຽກງານຫຼັກຊັບ ແລະ ລັດຖະບານ ທຸກຂັ້ນທັງພາຍໃນ ແລະຕ່າງປະເທດ ແມ່ນປັດໄຈສຳຄັນທີ່ຕັດສິນ ຄວາມສຳເລັດເຫຼົ່ານີ້. ດັ່ງນັ້ນ ການເພີ່ມທະວີຄວາມຮ່ວມມືດັ່ງກ່າວ ໃນຕໍ່ໜ້າຈຶ່ງເປັນປັດໄຈທີ່ຂາດບໍ່ໄດ້ ໃນພາລະກິດຂອງ ຜ-ຟຟລ ທີ່ ຈະສູ້ຊົນສືບຕໍ່ກໍ່ສ້າງ ແລະ ພັດທະນາບໍລິສັດຂອງຕົນ ໃຫ້ມີຄວາມ ເຂັ້ມແຂງ ແລະ ຍືນຍົງດ້ານການເງິນ ດ້ວຍການເປັນບໍລິສັດຈົດ ທະບຽນທີ່ກ້າວໜ້າ ໃນການນຳໃຊ້ເຄື່ອງມື ແລະ ນະວັດຕະກຳທາງ ການເງິນໃນຕະຫຼາດທຶນ, ທັງນີ້ກໍເພື່ອເຮັດໃຫ້ການເຕີບໃຫຍ່ຂະຫຍາຍ ຕົວຂອງ ຜ-ຟຟລ ເປັນໄປຄຽງຄູ່ກັບການພັດທະນາຕະຫຼາດທຶນຂອງ ສປປ ລາວ ຢ່າງໜັກແໜ້ນເທື່ອລະກ້າວ.



VIII. Finance

In order to meet sufficient funding requirement in a timely manner for the implementation of the company's strategic business expansion plan, EDL-Gen has actively undertaken several initiatives to raise the required financial capital based on our capacity and funding opportunities present in the capital market of Lao PDR. As a listed company on Lao Securities Exchange (LSX), EDL-Gen can directly raise funds from the public through share offering and bond issuance for its business expansion.

In July 2012, EDL-Gen became the first listed company in the LSX to successfully complete the offering of 357,619,715 new common shares through rights offering (RO) and public offering (PO), raising a total of LAK 1,611.15 billion. This fund was used to acquire shares of Electricite du Laos (EDL) held at 4 Independent Power Producers (IPPs) including TheunHinboun, HouayHo, Nam Ngum 2 and Nam Lik 1-2 Hydropower Plants (HPP) with a combined equity installed capacity of 494 MW. As a result, the company's total installed capacity increased significantly from 387 MW to 881 MW. Apart from the installed capacity growth, these acquisitions also diversify revenue sources and provide dividends in foreign currencies. Therefore, the expansion strategy through utilising this capital market instrument contributes to strengthen EDL-Gen's financial position.

Apart from a local capital market, EDL-Gen has continued to explore new sources of finance to support our business growth. In early 2014, under the leadership of EDL-Gen's Board of Directors and Management team, we began our first international fund raising project through debenture issuance. Following the approval from Lao Securities Commission in April 2014 regarding EDL-Gen's debenture offering in both Thailand and Lao PDR, EDL-Gen in cooperation with Twin Pine Consulting Ltd, a financial advisor to the Government of Lao PDR for its two successful bond offerings in Thailand in 2013, proceeded with its THB 6,500 million debenture offering with company credit rating being the first prerequisite.

The credit rating of EDL-Gen is a testament to our continued effort to build investor confidence in the company's overall capability in managing our business. In October 2014, EDL-Gen became the first public company in Lao PDR to have an investment grade credit rating by TRIS Rating Co., Ltd. at "BBB+".

Following the company credit rating, EDL-Gen had coordinated with our financial advisor and three co-arrangers to do company roadshows in Thailand as well as setting up a press tour for Thai journalists in Lao PDR in November 2014, which helped bring the debenture offering to a great success. EDL-Gen's Baht-denominated debentures subscribed by investors amounted to THB 12,490 million, almost twice the offering size. On 12 December 2014, EDL-Gen officially issued debentures and successfully raised the targeted THB 6,500 million. This financial capital are being invested for an additional 392 MW, comprising of 4 hydropower projects to be transferred from EDL to EDL-Gen with a combined installed capacity of 292 MW; and the acquisitions of shares from EDL held at 5 IPPs with a total of 100 MW. When the transfer of these projects and shares are complete, EDL-Gen will have a total installed capacity of 1,273 MW.

EDL-Gen's inaugural offering of Baht-denominated debentures in Thailand was met with an overwhelming success, thereby improving EDL-Gen's profile and credibility in international arena. This success is further highlighted as EDL-Gen was awarded Asiamoney Country Deal of the Year 2014 on 12 February 2015 in Hong Kong. In addition, in recognition of the success, EDL-Gen received International Financing Review Asia (IFR Asia) Award 2015 for Frontier Markets Issue category, which was awarded in Hong Kong on 24 February 2016 Furthermore, EDL-Gen became the first enterprise in CLMV (Cambodia, Lao PDR, Myanmar and Vietnam) countries to successfully access Thailand's bond market. This has become one of landmark transactions for ASEAN capital market integration for inclusive growth, and is a tangible contribution by EDL-Gen for the realisation of ASEAN Economic Community (AEC).

This achievement has also increased EDL-Gen's capacity to access financial resources in both local and foreign money markets. In 2015, EDL-Gen was able to execute a USD 68 million term loan facility from an overseas bank without a guarantee from the Lao government or its parent company. The borrowed funds were used in the major machinery maintenance projects of Nam Ngum 1, Nam Leuk and Nam Mang 3 HPP as planned, helping to ensure the efficiency and effectiveness of power generation.

To promote a strong and continued growth, EDL-Gen accomplished its new round of RO and PO in September 2015, raising LAK 2.754 billion as planned. This amount of fund will



finance a further 513.1 MW, including 5 wholly-owned projects from EDL with a combined 277.9 MW, shares from EDL in 6 IPPs with equity attributed installed capacity of 108.3 MW, and 2 joint-ventures of 126.9 MW. After the construction and expected transfer of all of these projects are complete in 2018, the total installed capacity of EDL-Gen will be around 1,786.1 MW.


All these remarkable achievements of EDL-Gen over the past five years are the direct product of a strong cooperation between EDL-Gen and all relevant parties. Apart from correct direction and resolute decisions under the leadership of EDL-Gen's Board of Directors and Management team, the understanding, close attention and cooperation, and unwavering support from Lao Securities Commission and governments at all level, both local and overseas, have been absolutely critical for these accomplishments. Therefore, to strengthen and deepen those ties and cooperation in the future is indispensable in our mission to further build and develop our company for greater financial strength and sustainability, and to deliver better values for all stakeholders. Such strategic partnerships are also essential for EDL-Gen to become a progressive and dynamic listed company that can effectively leverage new financial innovation so as to ensure that our continued growth can contribute to capital market development of Lao PDR.








1. ມອບພັນທະໃຫ້ລັດ
Royalty fee and other duties



2. ໂຄງສ້າງຜູ້ຖືຮຸ້ນ
Shareholder Structure



ຂໍ້ມູນສຳຄັນທາງດ້ານການເງິນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

EDL-Generation Public Company's Financial Highlight

Unit: Million Kip

ຂໍ້ມູນທາງດ້ານການເງິນ	Financial Highlight	2011	2012	2013	2014	2015
ໃບສະຫຼຸບຊັບສິນຫັດ	**Balance Sheet**					
ຊັບສິນໝຸນວຽນ	Current Asset	854.140	623.077	708.194	1.785.554	1.618.628
ຊັບສິນທັງໝົດ	**Total Assets**	**5.238.572**	**6.674.224**	**7.067.171**	**8.821.261**	**11.968.372**
ໜີ້ສິນໝຸນວຽນ	Current Liabilities	248.832	207.289	256.989	413.390	409.127
ໜີ້ສິນທັງໝົດ	**Total Liabilities**	**1.319.108**	**1.081.892**	**1.062.284**	**2.499.620**	**2.864.144**
ທຶນສ່ວນຂອງຜູ້ຖືຮຸ້ນ	**Shareholders' Equity**	**3.919.464**	**5.592.332**	**6.004.887**	**6.321.641**	**9.104.228**
ໃບລາຍງານຜົນໄດ້ຮັບ	Income Statement					
ຂາຍ	**Sales**	**881.748**	**779.887**	**862.429**	**839.193**	**847.759**
ຕົ້ນທຶນໃນການຂາຍ	Cost of sale	-204.671	-185.990	-203.935	-215.613	-276.443
ກຳໄລລວມ	Gross Profit	677.077	593.897	658.494	623.580	571.316
ກຳໄລໃນການດຳເນີນງານກ່ອນຫັກລາຍຈ່າຍການເງິນ ແລະ ອາກອນ	Operating Profit	634.950	559.662	576.168	487.634	456.512
ກຳໄລຮຸ້ນຈາກການຖືຮຸ້ນກັບບໍລິສັດຮຸ້ນສ່ວນ	Share of profit	-	105.605	453.746	474.467	286.218
ກຳໄລສຸດທິ	**Net Profit**	**563.568**	**602.469**	**971.742**	**907.684**	**640.839**
ອັດຕາສ່ວນທາງການເງິນ	**Financial Ratio**					
ອັດຕາສ່ວນສະພາບຄ່ອງ (ເທົ່າ)	Current Ratio (times)	3,4	3,0	2,8	4,3	4,0
ອັດຕາສ່ວນໜີ້ສິນຕໍ່ທຶນ (ເທົ່າ)	Debt to Equity Ratio (times)	0,34	0,19	0,18	0,40	0,31
ກຳໄລຂັ້ນຕົ້ນ	Gross Profit Margin (%)	77%	76%	76%	74%	67%
ກຳໄລສຸດທິ	Net Profit Margin (%)	64%	68%	74%	69%	57%
ອັດຕາສ່ວນໜີ້ສິນທັງໝົດ/ ກຳໄລກ່ອນຫັກດອກເບ້ຍ ແລະ ຄ່າລຸ້ຍທ້ຽນ (ເທົ່າ)	Total Debt/EBIDA	1,7	1,4	0,9	2,2	2,9
ອັດຕາສ່ວນກຳໄລກ່ອນຫັກດອກເບ້ຍ ແລະ ຄ່າລຸ້ຍທ້ຽນ/ດອກເບ້ຍຈ່າຍ (ເທົ່າ)	EBITDA/Interest	19,2	22,4	38,0	36,6	16,1
ອັດຕາຜົນຕອບແທນຕໍ່ຊັບສິນທັງໝົດ	**Return On Assets-ROA (%)**	**10,95%**	**10,11%**	**14,14%**	**11,43%**	**6,16%**
ອັດຕາຜົນຕອບແທນຕໍ່ທຶນ	**Return On Equity-ROE (%)**	**17,22%**	**12,67%**	**16,76%**	**14,73%**	**8,31%**
ມຸມຄ່າທາງຕະຫຼາດ	**Market Perspective**					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	**Basic Earning Per Share (kip)**	682	590	793	740	456
ເງິນປັນຜົນຕໍ່ຮຸ້ນກ່ອນອາກອນ (ກີບ)	**Dividend Per Share before tax (kip)**	**498**	**450**	**475**	**450**	**260**
ລາຄາ/ລາຄາພື້ນຖານ (ເທົ່າ)	Price/Book Value (P/BV)	1,1	1,3	1,3	1,8	1,5
ລາຄາ/ກຳໄລພື້ນຖານຕໍ່ຮຸ້ນ (ເທົ່າ)	Price/Earning Per Share (P/E)	6,2	8,6	6,4	9,5	12,9


ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ
EDL - Generation Public Company
No. 10496 012
UKAS
Others










ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL - Generation Public Company

IX. ການໃຫ້ບໍລິການຂອງມະນຸດກົບ (ນັກດຳນ້ຳ)

ນອກຈາກການລົງທຶນໃນແຫຼ່ງສະໜອງພະລັງງານແລ້ວ, ຜ-ຟຟລ ຍັງໃຫ້ການບໍລິການຄຸ້ມຄອງເຂື່ອນໄຟຟ້າ, ການບໍລິການແກ້ໄຂສ້ອມແປງພາກອຸປະກອນທີ່ຢູ່ໃຕ້ນ້ຳດ້ວຍມະນຸດກົບ(ນັກດຳນ້ຳ), ວຽກງານບໍລິການສະໂມສອນ ແລະ ວຽກງານອື່ນໆ ທີ່ມີຢູ່.

IX. Diving service

Apart from investment in electric power generation, EDL-Gen also provides O&M service for hydropower plants, repairing underwater equipment by EDL-Gen frogman team, accommodation services and others.







X. ລາງວັນຕ່າງໆທີ່ ຜ-ຟຟລ ໄດ້ຮັບ.

ຈາກການດຳເນີນງານ 5 ປີ ຜ່ານມາ ໄດ້ເຮັດໃຫ້ ຜ-ຟຟລ ໄດ້ຮັບຮູ້ຈາກສາກົນເຊັ່ນ: ໄດ້ຮັບລາງວັນ 'ASEAN Renewable-Energy Project Awards' ໃນງານມອບລາງວັນ 'The ASEAN Best Practice Awards' ໂດຍໃນກອງປະຊຸມລັດຖະມົນຕີພະລັງງານອາຊຽນ ຄັ້ງທີ 32 ເຊິ່ງຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນທ້າຍ ປີ 2014 (ເຂື່ອນໄຟຟ້າແຊລະບໍ), ໄດ້ຮັບໃບຢັ້ງຢືນມາດຕະຖານສາກົນ ISO 9001:2008 Quality Management System ໄລຍະປີ 2014-2017 (ສຳນັກງານໃຫຍ່), ໄດ້ຮັບໃບຢັ້ງຢືນມາດຕະຖານສາກົນ ISO 14001 2004 EMS ຈາກ Direct Assessment Service (DAS) 02 ຄັ້ງຕິດຕໍ່ກັນໄລຍະປີ 2012-2015 ແລະ ປີ 2015-2018 (ເຂື່ອນໄຟຟ້ານ້ຳງື່ມ 1) ແລະ ໄດ້ຮັບລາງວັນ Asian Money Country Deal ຈາກສະຖາບັນ Asiamoney ທີ່ຮົງກົງ ໃນກຸມພາ ປີ 2015 ຈາກຜົນສຳເລັດຂອງການອອກຮຸ້ນກູ້ທີ່ປະເທດໄທໃນທ້າຍ ປີ 2014 (ສຳນັກງານໃຫຍ່) ແລະ ປີ 2015-2018 (ເຂື່ອນໄຟຟ້ານ້ຳງື່ມ 1), ໄດ້ຮັບລາງວັນ Asian Money Country Deal ຈາກສະຖາບັນ Asian Money ທີ່ຮົງກົງ ໃນ ກຸມພາ ປີ 2015 ຈາກຜົນສຳເລັດຂອງການອອກຮຸ້ນກູ້ທີ່ປະເທດໄທ ໃນທ້າຍປີ 2014 ແລະ ໄດ້ຮັບລາງວັນ IFR Asia Awards 2015 for Frontier Markets Issue.

X. Achievements of EDL-Gen

As the result of five year operation of EDL-Gen, the company has been acknowledged worldwide and acquired some significant achievement as follows:

1. ASEAN Renewable Energy Project awards at The ASEAN Best Practice Awards event in the 32nd ASEAN Minister on Energy Meeting, Vientiane, 2014
2. ISO 9001:2008 certificate of Quality Management System for EDL-Gen head office in time period of 2014-2017
3. ISO 14001:2004 certificate of Environment Management System for Nam Ngum 1 from Direct Assessment Service two times in a row during 2012-2015 and 2015-2018
4. Asian Money Country Deal from Asiamoney (Hong kong) in February 2015 in regard to achievement of Baht Bond issue in 2014.
5. IFR Asia Awards 2015 for Frontier Markets Issue.







EDL - Generation Public Company


THOMSON REUTERS
DBS
HSBC


ວັນທີ 22 ທັນວາ 2014


ASIAMONEY
COUNTRY
DEALS
2014
Laos
EDL Generation Public Company's
Bt6.5bn triple tranche bond
TWIN PINE
Consulting

XI. ການປະກອບສ່ວນຕໍ່ສັງຄົມ
XI. Social Contribution






ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
26,000,000


ພິທີມອບ-ຮັບ
ແລະ ເປີດນຳໃຊ້ຊົນລະປະທານ
21/11/2014


ຄ້ຽວັນທີ: 13/2/2014


ພິທີ ປູກຕົ້ນໄມ້ ແລະ ປ່ອຍພັນປາ ເນື່ອຍົກຍ້ອງຮັກສາປ່າໄມ້, ແຫຼ່ງນ້ຳຫ້ວຍ ມະຊາດ ແລະ ອານຸລັກ ສິ່ງແວດລ້ອມ ໃຫ້ເປັນຍືງ
ເນື່ອງໃນໂອກາດ ວັນປູກຕົ້ນໄມ້ແຫ່ງຊາດ ວັນທີ 1 ມິຖຸນາ 2013
ທີ່ເຂື່ອນໄຟຟ້າ ນ້ຳໜ້ຽງ 3 ເມືອງ ທຸລະຄົມ ແຂວງວຽງຈັນ





ທາງເລືອກທີ່ຍືນຍົງສຳລັບທ່ານ ພະລັງງານທີ່ຍືນຍົງສຳລັບຊາດ

SUSTAINABLE CHOICE FOR YOU SUSTAINABLE POWER FOR THE NATION







ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-GENERATION PUBLIC COMPANY
ຖະໜົນມິດຕະພາບລາວ-ໄທ,
ບ້ານ ທ່ົງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ສປປ ລາວ ຕູ.ປ.ນ: 2392, ໂທລະສັບ: (+856 21) **316142**,ແຟັກ: (+856 21) **316141**
E-mail: **edlgenhq@edlgen.com.la**
wabsite: www.**edlgen.com.la**